ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ

ຫ້ອງການກະຊວງ

ເລກທີ 0013 /ຫກງ

ນະຄອນຫຼວງວຽງຈັນ, ວັນທີ 03 ມັງກອນ 2020

# ແຈ້ງການ

ເຖິງ: - ບັນດາຂະແໜງລາຍຮັບ, ຄັງເງິນແຫ່ງຊາດ, ຫົວໜ່ວຍງົບປະມານຂັ້ນສູນກາງ-ທ້ອງຖິ່ນ;

- ພະແນກການເງິນແຂວງ-ນະຄອນຫຼວງ, ຫ້ອງການການເງິນເມືອງ-ນະຄອນ;
- ບັນດາທະນາຄານທຸລະກິດຂອງລັດ, ທະນາຄານທຸລະກິດຕ່າງໆ;
- ບັນດາຫົວໜ່ວຍທຸລະກິດ, ຜູ້ດຳເນີນທຸລະກິດ ແລະ ຜູ້ປະກອບການທຸກພາກສ່ວນໃນຂອບເຂດທົ່ວປະເທດ.

ເລື່ອງ: ການນຳໃຊ້ໃບຮັບເງິນຂອງຄັງເງິນແຫ່ງຊາດເປັນເອກະສານຢັ້ງຢືນການມອບພັນທະເຂົ້າງົບປະມານແຫ່ງລັດ ຜ່ານລະບົບທະນາຄານ.

- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີ ກະຊວງການເງິນ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ຫ້ອງການກະຊວງການເງິນ ສະບັບເລກທີ 5050/ກງ, ລົງວັນທີ 24 ທັນວາ 2019;
- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີ ກະຊວງການເງິນ ວ່າດ້ວຍການຮັບຮອງແບບຟອມໃບຮັບເງິນຂອງຄັງເງິນແຫ່ງຊາດ ເພື່ອນຳໃຊ້ເປັນເອກະສານຢັ້ງຢືນໃນການມອບພັນທະເຂົ້າງົບປະມານແຫ່ງລັດ ຜ່ານລະບົບທະນາຄານ ສະບັບເລກທີ 5146/ກງ, ລົງວັນທີ 27 ທັນວາ 2019;
- ອີງຕາມ ໜັງສືສະເໜີ ຂໍລາຍເຊັນ ເລກທີ 0001/ຄງຊ, ລົງວັນທີ 02 ທັນວາ 2019.

ເພື່ອຮັບປະກັນການມອບລາຍຮັບງົບປະມານ ໃຫ້ລວມສູນຜ່ານລະບົບທະນາຄານ ດ້ວຍການນຳໃຊ້ໃບຮັບເງິນຂອງຄັງເງິນແຫ່ງຊາດ ໃຫ້ເປັນເອກະພາບໃນຂອບເຂດທົ່ວປະເທດ, ທັງເປັນການຊຸກຍູ້, ສົ່ງເສີມ, ການນຳໃຊ້ເຄື່ອງທັນສະໄໝເຂົ້າໃນການຄຸ້ມຄອງເກັບລາຍຮັບເຂົ້າງົບປະມານແຫ່ງລັດ, ໃຫ້ມີຄວາມໂປ່ງໃສ, ຖືກຕ້ອງ ແລະ ທັນຕາມກຳນົດເວລາ.

**ຫ້ອງການກະຊວງການເງິນ ອອກແຈ້ງການດັ່ງນີ້:**

1. ທະນາຄານທຸລະກິດຂອງລັດ, ທະນາຄານທຸລະກິດ ໄດ້ນຳໃຊ້ໃບຮັບເງິນຂອງຄັງເງິນແຫ່ງຊາດ ອອກເປັນເອກະສານຢັ້ງຢືນການມອບພັນທະໃຫ້ຜູ້ມອບພັນທະເຂົ້າງົບປະມານແຫ່ງລັດ ຜ່ານລະບົບທະນາຄານ ໃຫ້ເປັນເອກະພາບໃນຂອບເຂດທົ່ວປະເທດ;
2. ທະນາຄານທຸລະກິດຂອງລັດ, ທະນາຄານທຸລະກິດ ເລີ່ມນຳໃຊ້ໃບຮັບເງິນຂອງຄັງເງິນແຫ່ງຊາດ ຕັ້ງແຕ່ວັນທີ 01 ມັງກອນ 2020 ເປັນຕົ້ນໄປໃນຂອບເຂດທົ່ວປະເທດ;

3. ມອບໃຫ້ຄັງເງິນແຫ່ງຊາດ, ບັນດາກົມລາຍຮັບ, ທະນາຄານທຸລະກິດຂອງລັດ ແລະ ທະນາຄານທຸລະກິດ ພ້ອມກັນຈັດຕັ້ງເຜີຍແຜ່ແຈ້ງການສະບັບນີ້ໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງຮັບຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດຕາມແຈ້ງການສະບັບນີ້ຢ່າງເຂັ້ມງວດ;
4. ມອບໃຫ້ພະແນກການເງິນແຂວງ, ສ່ວຍສາອາກອນປະຈຳແຂວງ, ກອງຄຸ້ມຄອງພາສີ, ຄັງເງິນແຫ່ງຊາດປະຈຳແຂວງ-ນະຄອນຫຼວງ, ຄັງເງິນແຫ່ງຊາດປະຈຳເມືອງ-ນະຄອນ ຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງເຜີຍແຜ່ແຈ້ງການສະບັບນີ້ ໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງຮັບຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດແຈ້ງການສະບັບນີ້ຢ່າງເຂັ້ມງວດ;
5. ເນື້ອໃນຂອງນິຕິກຳໃດ ທີ່ກະຊວງການເງິນໄດ້ອອກໄລຍະຜ່ານມາທີ່ຂັດກັບເນື້ອໃນ ແຈ້ງການສະບັບນີ້ແມ່ນຖືກຍົກເລີກ.

ດັ່ງນັ້ນ, ຈຶ່ງແຈ້ງມາເພື່ອພ້ອມກັນຈັດຕັ້ງປະຕິບັດຕາມເນື້ອໃນແຈ້ງການສະບັບນີ້ຢ່າງເຂັ້ມງວດ.

ຫົວໜ້າຫ້ອງການກະຊວງ

ກະຊວງການເງິນ ຫ້ອງການ

ສົມບູນ ອິນທະປັດຖາ